ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພະລັງງານ ແລະບໍ່ແຮ່
ຫ້ອງການກະຊວງ

ເລກທີ 0529 /ພບ.ຫກ
ນະຄອນຫຼວງວຽງຈັນ, ວັນທີ 02 FEB 2024

# ແຈ້ງການ

ເຖິງ : ບັນດາບໍລິສັດ ແລະ ລັດວິສາຫະກິດໂຮງພິມ ທັງພາກລັດ ແລະ ເອກະຊົນ ໃນຂອບເຂດ ນະຄອນຫຼວງວຽງຈັນ ທີ່ນັບຖື

ເລື່ອງ: ແຈ້ງຜົນການຄັດເລືອກຜູ້ຊະນະການປະມູນ ຈັດພິມໜັງສືພິມ ພະລັງງານແລະ ບໍ່ແຮ່ ແບບລາຍປັກ ປະຈໍາປີ 2024.

- ອີງຕາມ ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017.
- ອີງຕາມ ຂໍ້ຕົກລົງຂອງ ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່, ສະບັບເລກທີ 1180/ພບ, ລົງວັນທີ 13 ມິຖຸນາ 2023 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງ.
- ອີງຕາມ ຂໍ້ຕົກລົງຂອງ ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່, ສະບັບເລກທີ 1709/ພບ, ລົງວັນທີ 24 ສິງຫາ 2022 ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບການ ປະມູນຈັດຊື້-ຈັດຈ້າງ ກໍ່ສ້າງ ແລະ ສ້ອມແປງ.
- ອີງຕາມ ຂໍ້ຕົກລົງຂອງ ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່, ສະບັບເລກທີ 0173/ພບ, ລົງວັນທີ 24 ມັງກອນ 2024 ວ່າດ້ວຍການຮັບຮອງເອົາບໍລິສັດ ທີ່ຊະນະການປະມູນ ການຈັດພິມໜັງສືພິມ ພະລັງງານແລະ ບໍ່ແຮ່ ແບບລາຍປັກ ປະຈໍາປີ 2024.
- ອີງຕາມ ໜັງສືແຈ້ງເຊີນເຂົ້າຮ່ວມປະມູນ, ສະບັບເລກທີ 5356/ພບ.ຫກ, ລົງວັນທີ 11 ທັນວາ 2023.
- ອີງຕາມ ບົດບັນທຶກກອງປະຊຸມເປີດຊອງການປະມູນ ການຈັດພິມໜັງສືພິມ ພະລັງງານແລະ ບໍ່ແຮ່ ແບບລາຍປັກ ປະຈໍາປີ 2024, ສະບັບເລກທີ 0179/ພບ.ຫກ, ລົງວັນທີ 12 ມັງກອນ 2024.
- ອີງຕາມ ໜັງສືລາຍງານການປະເມີນຜົນການປະມູນກ່ຽວກັບມາດຕະຖານເຕັກ ແລະ ລາຍການລະອຽດໃນການຈັດພິມ ໜັງສືພິມ ພະລັງງານແລະ ບໍ່ແຮ່ ແບບລາຍປັກ ປະຈໍາປີ 2024.

ຫ້ອງການກະຊວງພະລັງງານ ແລະ ບໍ່ແຮ່ ຂໍຖືເປັນກຽດແຈ້ງມາຍັງບັນດາບໍລິສັດ ແລະ ວິສາຫະກິດໂຮງພິມ ທັງພາກລັດ ແລະ ເອກະຊົນ ໃນຂອບເຂດນະຄອນຫຼວງວຽງຈັນ ທີ່ເຂົ້າຮ່ວມຍື່ນຊອງປະມູນຈັດພິມ ໜັງສືພິມພະລັງງານແລະ ບໍ່ແຮ່ ແບບລາຍປັກ ປະຈໍາປີ 2024 ໃນຄັ້ງວັນທີ 5 ມັງກອນ 2024 ຢູ່ຫ້ອງປະຊຸມນ້ອຍ ຊັ້ນ5 ຕຶກ1 ຊາບວ່າ: ຜ່ານການຄົ້ນຄວ້າ, ປຶກສາຫາລື ແລະພິຈາລະນາ ຢ່າງຖີ່ຖ້ວນແລ້ວ ຂອງຄະນະກໍາມະການຈັດຊື້-ຈັດຈ້າງ ກະຊວງພະລັງງານ ແລະ ບໍ່ແຮ່ ໄດ້ຕົກລົງຄັດເລືອກເອົາ **ບໍລິສັດ ລັດວິສາຫະກິດໂຮງພິມແຫ່ງລັດ** ເປັນຜູ້ຊະນະການປະມູນ ການຈັດພິມ ໜັງສືພິມ ພະລັງງານແລະ ບໍ່ແຮ່ ແບບລາຍປັກ ປະຈໍາປີ 2024.

ດັ່ງນັ້ນ, ຈຶ່ງຂໍຖືເປັນກຽດແຈ້ງ ມາຍັງບັນດາບໍລິສັດ ແລະ ລັດວິສາຫະກິດ ໂຮງພິມ ທີ່ເຂົ້າຮ່ວມຍື່ນຊອງປະມູນ ເພື່ອຮັບຊາບ.

ຫົວໜ້າຫ້ອງການ

ອົ້ກສອນ ຄໍາສະຫວັດ